ບໍລິສັດ ຊີມັ້ງລາວມະຫາຊົນ

ເອກະສານລາຍງານການເງິນ(ກ່ອນການກວດສອບ)
ສຳລັບໄຕມາດ3 ປີທີ່ສິ້ນສຸດວັນທີ 30 ກັນຍາ 2018

ບໍລິສັດ ຊີມັ້ງລາວມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານຂອງຄະນະບໍລິຫານ	4
ໃບລາຍງານຖານະການເງິນ	5-6
ໃບລາຍງານຜົນການດຳເນີນງານ	7
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	8
ໃບລາຍງານກະແສເງິນສົດ	9
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	10-25

ບໍລິສັດ ຊິມັງລາວມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ຊິມັງລາວມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນບໍລິສັດຊິມັງລາວຈຳກັດຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງທີ່ນະຄອນຫຼວງວຽງຈັນ,ສປປ ລາວໃນວັນທີ 15 ທັນວາ 1998 ລະຫວ່າງລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະບໍລິການຂາອອກ-ຂາເຂົ້າ(DAI) ("ຝ່າຍ ກ") ກັບບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານສປຈີນ (CYC)("ຝ່າຍ ຂ").

ໃນວັນທີ 6 ທັນວາ 1999,ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກທີ່ອອກໂດຍກະຊວງອຸດສະຫະກຳແລະການຄ້າ,ເຊິ່ງບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊິມັງແລະຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊິມັງເພື່ອການຈຳໜ່າຍພາຍໃນແລະສົ່ງອອກ.

ບໍລິສັດໄດ້ມີການປັບປຸງໃບທະບຽນວິສາຫະກິດດັ່ງລຸ່ມນີ້:

ໃບທະບຽນວິສາຫະກິດ	*ວັນທີ*
0078/ຈທກ	5 ເມສາ 2006
1719/ຈທກ	26 ກຸມພາ 2009
0244/ຈທກ	20 ກຸມພາ 2012
1436/ຈທກ	15 ພະຈິກ 2012
791/ຈທກ	13 ພະຈິກ 2015
1016/ຈທກ	5 ທັນວາ 2016
0247/ຈທກ	24 ມິນາ 2017
0688/ຈທກ	2 ສິງຫາ 2017
0160/ຈທກ	20 ກຸມພາ 2018

ພາຍໃນໄລຍະ, ກິດຈະກຳຫຼັກຂອງບໍລິສັດແມ່ນມີດັ່ງນີ້:

- ຜະລິດຊິມັງແລະຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັງ;
- ຂາຍສົ່ງແລະຂາຍຍ່ອຍຊິມັງແລະຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັງສຳລັບການບໍລິໂພກພາຍໃນແລະສົ່ງອອກ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນໜອງບອນ,ບ້ານໜອງບອນ,ເມືອງໄຊເສດຖາ,ນະຄອນຫຼວງວຽງຈັນ,ສປປລາວ. ບໍລິສັດຍັງມີໂຮງງານຊິມັງວັງວຽງ ຫຼັງ 2 ຢູ່ເມືອງວັງວຽງ,ແຂວງ ວຽງຈັນ, ສປປລາວ.

ສະພາອຳນວຍການ

ສະມາຊິກສະພາອຳນວຍການພາຍໃນໄລຍະແລະເຖິງວັນທີອອກເອກະສານລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	
ທ່ານຫຼີວເຫວີຍ	ປະທານ	
ທ່ານບຸນແປງບົວພັນ	ຮອງປະທານ	
ທ່ານຈ່າງລີ້	ສະມາຊິກ	
ທ່ານຈ່າວຊື	ສະມາຊິກ	ລາອອກຈາກຕຳແໜ່ງວັນທີ 25 ເມສາ 2018
ທ່ານ ລີ ມິງ	ສະມາຊິກ	ແຕ່ງຕັ້ງວັນທີ25ເມສາ 2018
ທ່ານ ເຈຍ ເຢົາຊີ	ສະມາຊິກ	
ທ່ານຄຳບົນໄຊເລົ່າວົງ	ສະມາຊິກ	
ທ່ານທອງປົນກິ່ງຄຳເພັດ	ສະມາຊິກ	
ທ່ານ ສ່ຽວ ເຈຍ	ສະມາຊິກອິດສະຫຼະ	
ທ່ານ ຫຼີ ຊຸນ ໂປ	ສະມາຊິກອິດສະຫຼະ	
ທ່ານ ວົງວິຈິດ ແກ້ວວົງກິດ	ສະມາຊິກອິດສະຫຼະ	

ຄະນະບໍລິຫານ

ສະມາຊິກຄະນະບໍລິຫານພາຍໃນໄລຍະແລະເຖິງວັນທີອອກເອກະສານລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	
ທ່ານຈ່າງລີ້	ຜູ້ອຳນວຍການໃຫຍ່	
ທ່ານຫຼີວເຫວີຍ	ຜູ້ອຳນວຍການ	
ທ່ານບຸນແປງບົວພັນ	ຜູ້ອຳນວຍການ	
ທ່ານຈ່າວຊື	ຜູ້ອຳນວຍການ	ລາອອກຈາກຕຳແໜ່ງວັນທີ 25 ເມສາ 2018
ທ່ານ ລີ ມິງ	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ25ເມສາ 2018
ທ່ານ ເຈຍ ເຢົາຊີ	ຜູ້ອຳນວຍການ	
ທ່ານຄຳບົນໄຊເລົ່າວົງ	ຜູ້ອຳນວຍການ	
ທ່ານທອງປົນກິ່ງຄຳເພັດ	ຜູ້ອຳນວຍການ	
ທ່ານ ສ່ຽວ ເຈຍ	ຜູ້ອຳນວຍການ	
ທ່ານ ຫຼີ ຊຸນ ໂປ	ຜູ້ອຳນວຍການ	
ທ່ານ ວົງວິຈິດ ແກ້ວວົງກິດ	ຜູ້ອຳນວຍການ	

ບໍລິສັດ ຊີມັງລາວມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ຊີມັງລາວມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນບໍລິສັດຊີມັງລາວຈຳກັດຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງທີ່ນະຄອນຫຼວງວຽງຈັນ,ສປປ ລາວໃນວັນທີ 15 ທັນວາ 1998 ລະຫວ່າງລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະບໍລິການຂາອອກ-ຂາເຂົ້າ(DAI) ("ຝ່າຍ ກ") ກັບບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານສປຈີນ (CYC)("ຝ່າຍ ຂ").

ໃນວັນທີ 6 ທັນວາ 1999,ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກທີ່ອອກໂດຍກະຊວງອຸດສະຫະກຳແລະການຄ້າ,ເຊິ່ງ ບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊີມັງແລະຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊີມັງເພື່ອການຈຳໜ່າຍພາຍໃນແລະ ສົ່ງອອກ.

ບໍລິສັດໄດ້ມີການປັບປຸງໃບທະບຽນວິສາຫະກິດດັ່ງລຸ່ມນີ້:

ໃບທະບຽນວິສາຫະກິດ	*ວັນທີ*
0078/ຈທກ	5 ເມສາ 2006
1719/ຈທກ	26 ກຸມພາ 2009
0244/ຈທກ	20 ກຸມພາ 2012
1436/ຈທກ	15 ພະຈິກ 2012
791/ຈທກ	13 ພະຈິກ 2015
1016/ຈທກ	5 ທັນວາ 2016
0247/ຈທກ	24 ມິນາ 2017
0688/ຈທກ	2 ສິງຫາ 2017
0160/ຈທກ	20 ກຸມພາ 2018

ພາຍໃນໄລຍະ, ກິດຈະກຳຫຼັກຂອງບໍລິສັດແມ່ນມີດັ່ງນີ້:

- ຜະລິດຊີມັງແລະຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊີມັງ;
- ຂາຍສົ່ງແລະຂາຍຍ່ອຍຊີມັງແລະຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊີມັງສຳລັບການບໍລິໂພກພາຍໃນແລະສົ່ງອອກ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນໜອງບອນ,ບ້ານໜອງບອນ,ເມືອງໄຊເສດຖາ,ນະຄອນຫຼວງວຽງຈັນ,ສປປລາວ. ບໍລິສັດຍັງມີ ໂຮງງານຊີມັງວັງວຽງ ຫຼັງ 2 ຢູ່ເມືອງວັງວຽງ,ແຂວງ ວຽງຈັນ, ສປປລາວ.

ບໍລິສັດ ຊິມັ້ງລາວມະຫາຊົນ

ຂໍ້ມູນທົ່ວໄປ (ຕໍ່)

ຄະນະກຳມະການກວດສອບ

ສະມາຊິກຂອງຄະນະກຳມະການກວດສອບຂອງບໍລິສັດພາຍໃນໄລຍະແລະເຖິງວັນທີອອກເອກະສານລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*
ທ່ານ ສ່ຽວ ເຈຍ	ປະທານ
ທ່ານ ຫຼີ ຊຸນ ໂປ	ສະມາຊິກ
ທ່ານ ວິງວິຈິດ ແກ້ວວິງກິດ	ສະມາຊິກ

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນບໍລິສັດ ເອີນແອນຢັ້ງລາວຈຳກັດ.
ເອກະສານລາຍງານການເງິນຂອງບໍລິສັດສຳລັບໄລຍະເວລາເກົ້າເດືອນ ແຕ່ວັນທີ 30ກັນຍາ 2018 ແລະ ວັນທີ 30ກັນຍາ 2017 ບໍ່ໄດ້ຖືກກວດສອບ ຫຼື ທົບທວນຄືນ.

ບໍລິສັດ ຊີມັງລາວມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານບໍລິສັດ ຊີມັງລາວມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງແລະພ້ອມທັງເອກະສານລາຍງານການເງິນຂອງບໍລິສັດ ແລະ ສຳລັບໄຕມາດ3 ສິ້ນສຸດວັນທີ 30ກັນຍາ2018.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນໄຕມາດ3

ຄະນະບໍລິຫານມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນສຳລັບໄຕມາດ3, ເຊິ່ງຈະຕ້ອງກະກຽມໂດຍອີງຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໃນບົດອະທິບາຍເອກະສານລາຍງານການເງິນ ເລກທີ 3. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງເພື່ອນຳສະເໜີຖານະການເງິນ,ຜົນຂອງການດຳເນີນທຸລະກິດແລະກະແສເງິນສົດສຳລັບໄຕມາດ3ຂອງບໍລິສັດໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະລາຍງານການເງິນສຳລັບໄຕມາດ3, ຄະນະບໍລິຫານຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະນຳໃຊ້ຢ່າງສອດຄ່ອງ;
- ພິຈາລະນາແລະຄາດຄະເນຢ່າງສົມເຫດສົມຜົນແລະລະອຽດຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງຫຼືການລະເມີດທີ່ສຳຄັນຕໍ່ກັບມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍແລະອະທິບາຍໃນເອກະສານລາຍງານການເງິນ; ແລະ,
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານຫຼືຄາດຄະເນວ່າທຸລະກິດຈະບໍ່ສາມາດດຳເນີນຕໍ່ໄປໄດ້.

ຄະນະບໍລິຫານມີຄວາມຮັບຜິດຊອບໃນການຮັບປະກັນວ່າບັນດາຂໍ້ມູນທາງການບັນຊີທີ່ຖືກບັນທຶກໄວ້ນັ້ນໄດ້ສະແດງເຖິງຄວາມຖືກຕ້ອງຢ່າງເໝາະສົມຢູ່ຕະຫຼອດເວລາກ່ຽວກັບຖານະການເງິນສຳລັບໄຕມາດ3ຂອງບໍລິສັດ ແລະຮັບປະກັນວ່າເອກະສານລາຍງານການເງິນໄດ້ສອດຄ່ອງກັບຫຼັກການທາງດ້ານບັນຊີທີ່ເໝາະສົມ. ຄະນະບໍລິຫານຍັງມີຄວາມຮັບຜິດຊອບໃນການຮັກສາຊັບສິນຂອງບໍລິສັດ ແລະຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນແລະຊອກຫາການສໍ້ໂກງແລະສິ່ງຜິດປົກກະຕິອື່ນໆ.

ຄະນະບໍລິຫານຢັ້ງຢືນວ່າໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສຳລັບໄຕມາດ3ສະບັບນີ້.

ການອະນຸມັດເອກະສານລາຍງານການເງິນ

ພວກຂ້າພະເຈົ້າຕົກລົງເຫັນດີອະນຸມັດຮັບຮອງເອົາເອກະສານລາຍງານການເງິນສຳລັບໄຕມາດ3ສິ້ນສຸດວັນທີ 30ກັນຍາ2018ທີ່ຖືກກະກຽມໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍເລກທີ 3 ຂອງເອກະສານລາຍງານການເງິນ.

ໃນນາມ ແລະ ໂດຍອຳນວຍການ:

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານ ຈ່າງລີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປລາວ
31 ຕຸລາ 2018

ບໍລິສັດຊີມັງລາວມະຫາຊົນ

ໃບລາຍງານຖານະທາງການເງິນ(ກ່ອນການກວດສອບ)(ຕໍ່)
ນະວັນທີ 30 ກັນຍາ 2018

	ບົດອະທິບາຍເລກທີ	30ກັນຍາ2018 ກີບ	31 ທັນວາ2017 ກີບ
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນບັດຄົງທີ່	4	26,012,092,268	35,542,584,664
ຊັບສິນພວມກໍ່ສ້າງ	5	6,053,545,768	4,417,773,226
ຊັບສິນບັດຄົງທີ່ບໍ່ມີຕົວຕົນ		328,548,475	328,548,475
ຊັບສິນບໍ່ໝຸນວຽນອື່ນໆ	6	-	431,320,000
ລວມຊັບສິນບໍ່ໝຸນວຽນ		**32,394,186,511**	**40,720,226,365**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ		-	-
ອາກອນມູນຄ່າເພີ່ມທີ່ຫັກໄດ້		3,531,322,017	145,135,500
ເຄື່ອງໃນສາງ	7	66,209,851,304	-
ໜີ້ຕ້ອງຮັບອື່ນໆ		-	30,841,850,999
ເງິນລ່ວງໜ້າໃຫ້ແກ່ຜູ້ສະໜອງ		399,182,457	19,997
ໜີ້ຕ້ອງຮັບການຄ້າ	8	7,375,157,213	1,366,553,654
ການລົງທຶນໄລຍະສັ້ນ	9	5,661,086,464	-
ເງິນສົດ	10	21,163,415,636	11,479,523,628
ລວມຊັບສິນໝຸນວຽນ		**104,340,015,091**	**85,914,606,255**
ລວມຊັບສິນທັງໝົດ		**136,734,201,602**	**126,634,832,620**
ໜີ້ສິນແລະທຶນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ		13,495,057,281	10,294,385,490
ເງິນລ່ວງໜ້າຈາກລູກຄ້າ		-	154,773,000
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ	22	-	3,191,212,598
ເງິນກູ້		-	12,107,150,240
ພັນທະອາກອນ	11	7,237,719,413	7,184,154,148
ໜີ້ຕ້ອງສົ່ງໃຫ້ພະນັກງານ		2,106,972,445	676,478,313
ຄ້າງສຳຮອງກອງທຶນສະຫວັດດີການ	12	4,649,099,342	5,380,508,915
ໜີ້ຕ້ອງສົ່ງອື່ນໆ	13	15,136,384,399	15,312,348,770
ລວມໜີ້ສິນໝຸນວຽນ		**42,625,232,880**	**54,301,011,474**
ລວມໜີ້ສິນທັງໝົດ		**42,625,232,880**	**54,301,011,474**

ບໍລິສັດຊີມັງລາວມະຫາຊົນ

ໃບລາຍງານຖານະທາງການເງິນ(ກ່ອນການກວດສອບ)(ຕໍ່)
ນະວັນທີ 30 ກັນຍາ 2018

	ບົດອະທິບາຍເລກທີ	30 ກັນຍາ2018 ກີບ	31ທັນວາ2017 ກີບ
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກແລ້ວ	14	20,002,000,000	14,001,400,000
ສ່ວນເກີນມູນຄ່າຮຸ້ນ		18,385,975,511	16,660,000
ຄັງແຮຕາມລະບຽບການ		7,661,007,370	6,800,594,894
ຄັງຂະຫຍາຍໂຮງຈັກໂຮງງານ		18,484,897,832	17,194,279,118
ກຳໄລສະສົມ		29,575,088,009	34,320,887,134
ລວມທຶນ		**94,108,968,722**	**72,333,821,146**
ລວມໜີ້ສິນແລະທຶນທັງໝົດ		**136,734,201,602**	**126,634,832,620**

ທ່ານຈ່າງລີ
ຜູ້ອຳນວຍການໃຫຍ່

ທ່ານຈ່າງ ຢິງ ຟູ
ຜູ້ຈັດການຝ່າຍການບັນຊີ - ການເງິນ

31 ຕຸລາ 2018

ບໍລິສັດຊີມັງລາວມະຫາຊົນ

ໃບລາຍງານຜົນການດຳເນີນງານ(ກ່ອນການກວດສອບ)
ສຳລັບໄຕມາດ3 ທີ່ສິ້ນສຸດ ວັນທີ 30 ກັນຍາ 2018

	ບົດອະທິບາຍ ເລກທີ	*ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດວັນທີ30 ກັນຍາ 2018* *ກີບ*	*ສຳລັບໄລຍະຫົກເດືອນຕົ້ນປີທີ່ ສິ້ນສຸດວັນທີ30 ກັນຍາ2017* *ກີບ*
ລາຍຮັບຈາກການຂາຍ	15	51,661,558,900	90,308,666,936
ຕົ້ນທຶນຈາກການຂາຍ	16	(36,209,224,850)	(71,051,781,219)
ກຳໄລລວມ		**15,452,334,050**	**19,256,885,717**
		-	
ລາຍຮັບການດຳເນີນງານອື່ນໆ		29,697,251	-
ເກັບຄືນເງິນແຮໜີ້ທວງຍາກ		-	-
ຕົ້ນທຶນການຂາຍແລະຈຳໜ່າຍ	17	(4,067,129,513)	(8,131,875,950)
ລາຍຈ່າຍໃນການດຳເນີນງານ	18	(8,179,396,487)	(6,592,725,071)
ກຳໄລຈາກການດຳເນີນງານ		**3,235,505,300**	**4,532,284,696**
		-	-
ລາຍຮັບການເງິນ	19	372,265,735	407,913,997
ລາຍຈ່າຍການເງິນ	20	(964,530,456)	(1,647,639,239)
ກຳໄລກ່ອນອາກອນ		**2,643,240,580**	**3,292,559,454**
ອາກອນກຳໄລ	21	(643,728,869)	(930,228,541)
ກຳໄລສຸດທິໃນໄລຍະ		**1,999,511,711**	**2,362,330,913**

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານຈ່າງລີ້
ຜູ້ອຳນວຍການໃຫຍ່

ທ່ານຈ່າງ ຢິງ ຟູ
ຜູ້ຈັດການຝ່າຍການບັນຊີ - ການເງິນ

31 ຕຸລາ 2018

ບໍລິສັດຊີມັງລາວມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ(ກ່ອນການກວດສອບ)

ສຳລັບໄຕມາດ ທີ່ສິ້ນສຸດ ວັນທີ 30ກັນຍາ 2018

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ ກີບ	*ສ່ວນເກີນມູນຄ່າຮຸ້ນ ກີບ*	*ຄັງສຳຮອງຕາມລະບຽບການ ກີບ*	*ຄັງຂະຫຍາຍໂຮງຈັກໂຮງງານ ກີບ*	*ກຳໄລສະສົມ ກີບ*	*ລວມທັງໝົດ ກີບ*
ຍອດເຫຼືອນະວັນທີ1ມັງກອນ2017	3,631,150,081	-	6,220,227,892	16,323,728,614	33,420,432,396	59,595,538,983
ອອກຮຸ້ນໃໝ່	10,370,249,919	16,660,000	-	-	-	10,386,909,919
ກຳໄລສຸດທິພາຍໃນປີ	-	-	-	-	2,362,330,913	2,362,330,913
ໂອນເປັນເງິນແຮຕາມລະບຽບການ	-	-	580,367,002	-	(580,367,002)	-
ໂອນເປັນເງິນແຮອື່ນໆ	-	-	-	870,550,504	(870,550,504)	-
ອາກອນເພີ່ມເຕີມສຳລັບປີຜ່ານມາຕາມການໄລ່ລຽງຂອງເຈົ້າໜ້າທີ່ສອຍສາອາກອນ	-	-	-	-	(1,900,000,000)	(1,900,000,000)
ໂອນເປັນເງິນແຮສະຫວັດດີການ	-	-	-	-	(580,367,003)	(580,367,003)
ຈ່າຍເງິນປັນຜົນ	-	-	-	-	(3,772,385,517)	(3,772,385,517)
ຍອດເຫຼືອນະວັນທີ 30 ກັນຍາ2017	**14,001,400,000**	**16,661,000**	**6,800,594,894**	**17,194,279,118**	**28,079,093,283**	**66,092,027,295**
ຍອດເຫຼືອນະວັນທີ1ມັງກອນ2018	14,001,400,000	16,660,000	6,800,594,894	17,194,279,118	34,320,887,134	72,333,821,146
ອອກຮຸ້ນໃໝ່	6,000,600,000	18,369,315,511	-	-	-	24,369,915,511
ກຳໄລສຸດທິພາຍໃນປີ	-	-	-	-	1,999,511,710	1,999,511,710
ໂອນເປັນເງິນແຮຕາມລະບຽບການ .	-	-	860,412,476	-	(860,412,476)	-
ໂອນເປັນເງິນແຮອື່ນໆ	-	-	-	1,290,618,714	(1,290,618,714)	-
ອາກອນເພີ່ມເຕີມສຳລັບປີຜ່ານມາຕາມການໄລ່ລຽງຂອງເຈົ້າໜ້າທີ່ສອຍສາອາກອນ	-	-	-	-	(933,587,969)	(933,587,969)
ໂອນເປັນເງິນແຮສະຫວັດດີການ	-	-	-	-	(860,412,476)	(860,412,476)
ຈ່າຍເງິນປັນຜົນ	-	-	-	-	(2,800,279,200)	(2,800,279,200)
ຍອດເຫຼືອນະວັນທີ 30 ກັນຍາ2018	**20,002,000,000**	**18,385,975,511**	**7,661,007,370**	**18,484,897,832**	**29,575,088,009**	**94,108,968,722**

ທ່ານ ...

ຜູ້ອຳນວຍການໃຫຍ່

31 ຕຸລາ 2018

ທ່ານ ...

ຜູ້ຈັດການຝ່າຍການບັນຊີ - ການເງິນ

ບໍລິສັດຊີມັງລາວມະຫາຊົນ

ໃບລາຍງານກະແສເງິນສົດ(ກ່ອນການກວດສອບ)
ສຳລັບໄຕມາດ3 ທີ່ສິ້ນສຸດ ວັນທີ 30ກັນຍາ 2018

	ບົດອະທິບາຍເລກທີ	*ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ 2018* ກີບ	*ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ 2017* ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**2,643,240,580**	**3,292,559,454**
ລາຍການດັດແກ້:		-	-
ຄ່າຫຼ້ຍຫ້ຽນຊັບສິນບັດຄົງທີ		4,717,915,962	6,833,256,420
ເງິນແຮສຳລັບໜີ້ທວງຍາກ		(193,667,569)	510,974,000
ກຳໄລ/ຂາດທຶນຈາກອັດຕາແລກປ່ຽນສຸດທິ		(103,940,874)	(45,556,484)
ລາຍຈ່າຍດອກເບ້ຍ		458,488,772	1,276,779,637
ລາຍຮັບຈາກການດຳເນີນງານກ່ອນການປ່ຽນແປງຂອງທຶນ		**7,522,036,870**	**11,868,013,028**
ເພີ່ມຂຶ້ນຂອງໜີ້ຕ້ອງຮັບທາງການຄ້າແລະໜີ້ຕ້ອງຮັບ			
ອື່ນລວມທັງໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ		39,175,170,250	19,944,489,721
ຫຼຸດລົງ/(ເພີ່ມຂຶ້ນ)ຂອງເຄື່ອງໃນສາງ		(39,556,614, 376)	(49,845,592,225)
ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ຕ້ອງສົ່ງທາງການຄ້າແລະໜີ້ຕ້ອງ			
ສົ່ງອື່ນ, ລວມທັງໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ		27,853,504,776	20,465,408,471
ລາຍຈ່າຍດອກເບ້ຍເງິນກູ້		(458,488,772)	(503,725,879)
ລາຍຈ່າຍອາກອນລາຍໄດ້		(763,821,741)	(930,228,541)
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**33,771,787,007**	**998,364,575**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຈັດຊື້ຊັບສິນບັດຄົງທີ່		(8,713,253,692)	(255,430,666)
ກະແສເງິນສົດສຸດທິໃຊ້ໃນກິດຈະກຳການລົງທຶນ		**(8,713,253,692)**	**(255,430,666)**
ກະແສເງິນສົດຈາກກິດຈະກຳທາງການເງິນ			
ລາຍຈ່າຍເງິນປັນຜົນ		(3,280,211,600)	(1,305,529,600)
ລາຍຈ່າຍຕົ້ນທຶນເງິນກູ້		-	10,107,150,240
ເງິນກູ້ທະນາຄານທີ່ໄດ້ຊຳລະ		(12,107,150,240)	(10,557,966,880)
ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳການເງິນ		**(15,387,361,840)**	**(1,756,346,240)**
ເພີ່ມຂຶ້ນສຸດທິຂອງເງິນສົດ		9,671,171,474	(1,013,412,332)
ເງິນສົດຕົ້ນໄລຍະ		11,479,523,628	9,045,254,364
ຜົນກະທົບຈາກອັດຕາແລກປ່ຽນ		12,720,534	173,167,822
ເງິນສົດທ້າຍໄລຍະ	**10**	**21,163,415,636**	**8,205,009,854**

ທ່ານ ບຸນ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຢົ່ງຟູ
ຜູ້ຈັດການຝ່າຍການບັນຊີ - ການເງິນ

31ຕຸລາ 2018

ບໍລິສັດຊິມັ່ງລາວມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ(ກ່ອນການກວດສອບ)
ນະວັນທີ1ແລະສຳລັບໄຕມາດ3 ສິ້ນສຸດວັນທີ30 ກັນຍາ 2018

1. ຂໍ້ມູນບໍລິສັດ

ບໍລິສັດ ຊິມັ່ງລາວມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນບໍລິສັດຊິມັ່ງລາວຈຳກັດຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນ ຂອງບໍລິສັດທີ່ເຊັນຮັບຮອງທີ່ນະຄອນຫຼວງວຽງຈັນ,ສປປ ລາວໃນວັນທີ 15 ທັນວາ 1998 ລະຫວ່າງລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳແລະບໍລິການຂາອອກ-ຂາເຂົ້າ(DAI) ("ຝ່າຍ ກ") ກັບບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານສປຈີນ (CYC)("ຝ່າຍ ຂ").

ໃນວັນທີ 6 ທັນວາ 1999,ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກທີ່ອອກໂດຍກະຊວງອຸດສະຫະກຳແລະ ການຄ້າ,ເຊິ່ງບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊິມັ່ງແລະຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊິມັ່ງເພື່ອການ ຈຳໜ່າຍພາຍໃນແລະສົ່ງອອກ.

ບໍລິສັດໄດ້ມີການປັບປຸງໃບທະບຽນວິສາຫະກິດດັ່ງລຸ່ມນີ້:

ໃບທະບຽນວິສາຫະກິດ	*ວັນທີ*
0078/ຈທກ	5 ເມສາ 2006
1719/ຈທກ	26 ກຸມພາ 2009
0244/ຈທກ	20 ກຸມພາ 2012
1436/ຈທກ	15 ພະຈິກ 2012
791/ຈທກ	13 ພະຈິກ 2015
1016/ຈທກ	5 ທັນວາ 2016
0247/ຈທກ	24 ມີນາ 2017
0688/ຈທກ	2 ສິງຫາ 2017
0160/ຈທກ	20 ກຸມພາ 2018

ພາຍໃນປີ, ກິດຈະກຳຫຼັກຂອງບໍລິສັດແມ່ນມີດັ່ງນີ້:

- ▶ ຜະລິດຊິມັ່ງແລະຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງ;
- ▶ ຂາຍສົ່ງແລະຂາຍຍ່ອຍຊິມັ່ງແລະຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງສຳລັບການບໍລິໂພກພາຍໃນແລະສົ່ງອອກ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນໜອງບອນ,ບ້ານໜອງບອນ,ເມືອງໄຊເສດຖາ,ນະຄອນຫຼວງວຽງຈັນ,ສປປລາວ. ບໍລິສັດຍັງມີໂຮງງານຊິມັ່ງວ້ຽງ ຫຼັງ 2 ຢູ່ເມືອງວ້ຽງ,ແຂວງ ວຽງຈັນ, ສປປລາວ.

ນະວັນທີ 30 ກັນຍາ2018ບໍລິສັດມີພະນັກງານ407ຄົນ (31 ທັນວາ 2017ພະນັກງານ410ຄົນ).

2. ພື້ນຖານການກະກຽມເອກະສານລາຍງານການເງິນ

ເອກະສານລາຍງານການເງິນສຳລັບໄຕມາດ3ຂອງບໍລິສັດແມ່ນໄດ້ຖືກກະກຽມໂດຍນຳໃຊ້ຫຼັກການຕົ້ນທຶນເດີມ.ເອກະສານ ລາຍງານການເງິນສຳລັບໄຕມາດ3ສະບັບນີ້ແມ່ນໄດ້ຖືກລາຍງານເປັນສະກຸນເງິນກີບລາວ ("ກີບ") ເຊິ່ງເປັນສະກຸນເງິນຫຼັກທີ່ນຳ ໃຊ້ໃນການດຳເນີນທຸລະກິດຂອງບໍລິສັດ.

ເອກະສານລາຍງານການເງິນສຳລັບໄຕມາດ3ຂອງບໍລິສັດແມ່ນໄດ້ຖືກກະກຽມໂດຍສອດຄ່ອງຕາມລະບຽບການບັນຊີເຊິ່ງໄດ້ ລະບຸໄວ້ໃນບົດອະທິບາຍເອກະສານລາຍງານການເງິນເລກທີ 3 ແລະບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີຖານະການເງິນ,ຜົນ ຂອງການດຳເນີນງານແລະກະແສເງິນສຳລັບໄຕມາດ3ຂອງບໍລິສັດຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

2. **ພື້ນຖານການກະກຽມເອກະສານລາຍງານການເງິນ(ຕໍ່)**

ເອກະສານລາຍງານການເງິນສຳລັບໄຕມາດ3ແມ່ນຖືກກະກຽມເພື່ອຊ່ວຍໃຫ້ບໍລິສັດຕອບສະໜອງຄວາມຕ້ອງການການລາຍງານຂອງຜູ້ຖືຮຸ້ນເທົ່ານັ້ນ. ດັ່ງນັ້ນ, ເອກະສານລາຍງານການເງິນສຳລັບໄຕມາດ3ດັ່ງກ່າວ ອາດຈະບໍ່ ເໝາະສົມສຳລັບຈຸດປະສົງອື່ນແລະແຈກຢາຍໃຫ້ຫຼືນຳໃຊ້ໂດຍພາກສ່ວນອື່ນ.

ປີການບັນຊີ

ປີການບັນຊີຂອງບໍລິສັດແມ່ນເລີ່ມຈາກວັນທີ1ມັງກອນແລະສິ້ນສຸດວັນທີ31ທັນວາ.

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ**

ຊັບສິນບັດຄົງທີ່ມີຕົວຕົນ

ຊັບສິນບັດຄົງທີ່ມີຕົວຕົນແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼ້ຽຫ້ຽງສະສົມ.

ຕົ້ນທຶນຂອງຊັບສິນບັດຄົງທີ່ ແລະ ອຸປະກອນທີ່ຊື້ໂດຍບໍລິສັດ ເຊິ່ງປະກອບດ້ວຍລາຄາຊື້ແລະທຸກຄ່າໃຊ້ຈ່າຍທີ່ຕິດພັນໂດຍກົງທີ່ເກີດຂຶ້ນໃນການເຮັດໃຫ້ຊັບສິນບັດຢູ່ໃນສະພາບພ້ອມໃຊ້ງານ. ລາຍຈ່າຍເພີ່ມເຕີມ, ການປັບປຸງແລະການຕໍ່ເຕີມແມ່ນຈັດເຂົ້າໃນມູນຄ່າຕົ້ນທຶນ. ໃນຂະນະທີ່ລາຍຈ່າຍສຳລັບການບຳລຸງຮັກສາແລະການສ້ອມແປງແມ່ນຈັດເຂົ້າໃນໃບລາຍງານການດຳເນີນງານສຳລັບໄຕມາດ3 ປີ2018.

ເມື່ອຊັບສິນບັດຄົງທີ່ໄດ້ຖືກຂາຍຫຼືສະສາງ, ຕົ້ນທຶນແລະຄ່າຫຼ້ຽຫ້ຽງສະສົມແມ່ນຈະຖືກຕັດອອກຈາກໃບລາຍງານຖານະການເງິນແລະກຳໄລຫຼືຂາດທຶນຈາກການຂາຍອອກແມ່ນຈະລວມຢູ່ໃນລາຍຮັບການດຳເນີນງານອື່ນໆຫຼືບັນຊີລາຍຈ່າຍໃນໃບລາຍງານຜົນການດຳເນີນງານຕາມລຳດັບ.

ຊັບສິນພວມກໍ່ສ້າງສະແດງເຖິງຊັບສິນພາຍໃຕ້ການກໍ່ສ້າງ. ເຊິ່ງປະກອບມີຄ່າໃຊ້ຈ່າຍຂອງການກໍ່ສ້າງແລະຄ່າໃຊ້ຈ່າຍໂດຍກົງອື່ນໆ.

ຊັບສິນທີ່ຖືກຫັກຄ່າຫຼ້ຽຫ້ຽງໝົດຕາມອາຍຸການນຳໃຊ້ຖືກເກັບຮັກສາໄວ້ໃນບັນຊີຈົນກວ່າຈະບໍ່ມີການນຳໃຊ້ແລະຈະບໍ່ມີຫັກຄ່າຫຼ້ຽຫ້ຽງແລະຄ່າເສື່ອມລາຄາທີ່ຮັບຮູ້ໃນໃບລາຍງານຜົນການດຳເນີນງານອີກ.

ຄ່າຫຼ້ຽຫ້ຽງ

ການຫັກຄ່າຫຼ້ຽຫ້ຽງຂອງຊັບສິນບັດຄົງທີ່ແມ່ນນຳໃຊ້ວິທີຄິດໄລ່ແບບສະເໝີຕົ້ນຕາມອາຍຸການນຳໃຊ້ຂອງຊັບສິນແຕ່ລະປະເພດດັ່ງນີ້:

ອາຄານແລະໂຄງສ້າງ	5 ຫາ 20 ປີ
ເຄື່ອງຈັກແລະອຸປະກອນ	5 ປີ
ພາຫະນະຂົນສົ່ງ	5 ປີ
ການປັບປຸງສິດທິໃນການເຊົ່າ	10 ປີ
ເຄື່ອງໃຊ້ຫ້ອງການ	10 ປີ
ອື່ນໆ	10 ປີ

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ(ຕໍ່)**

ຊັບສິນບັດຄົງທີ່ມີຕົວຕົນ(ຕໍ່)

ຄ່າຫຼ້ຍຫ້ຽນ(ຕໍ່)

ການຫັກຄ່າຫຼ້ຍຫ້ຽນຂອງຊັບສິນບັດຄົງທີ່ທີ່ຊື້ເພີ່ມ ແລະສະສາງອອກພາຍໃນປີແມ່ນຄິດໄລ່ອີງຕາມສັດສ່ວນໄລຍະເວລາໃນການນຳໃຊ້ນັບແຕ່ມື້ທີ່ເລີ່ມຕົ້ນນຳໃຊ້ແລະມື້ທີ່ສະສາງອອກຕົວຈິງ. ສຳລັບຊັບສິນພວມກໍ່ສ້າງແມ່ນ ບໍ່ມີການຫັກຄ່າຫຼ້ຍຫ້ຽນ ຈົນກວ່າຈະເຖິງເວລາທີ່ຊັບສິນດັ່ງກ່າວສຳເລັດ ແລະ ຖືກນຳໃຊ້.

ຊັບສິນບັດຄົງທີ່ທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ທີ່ບໍ່ມີຕົວຕົນ ໝາຍເຖິງສິດໃນການນຳໃຊ້ທີ່ດິນທີ່ບໍ່ກຳນົດໄລຍະເວລາການນຳໃຊ້ ແລະ ລາຍງານໃນມູນຄ່າຕົ້ນທຶນ. ຕົ້ນທຶນຂອງສິດໃນການນຳໃຊ້ທີ່ດິນ ເຊິ່ງປະກອບດ້ວຍ ລາຄາຊື້ ແລະ ຕົ້ນທຶນໂດຍກົງຕ່າງໆແມ່ນຈະບໍ່ມີການຫັກຄ່າເສື່ອມ.

ຊັບສິນອື່ນໆ

ຊັບສິນທີ່ຈັດຊື້, ຄຸ້ມຄອງ ແລະ ນຳໃຊ້ໂດຍບໍລິສັດ ເຊິ່ງອອກຊື່ພາຍໃຕ້ຊື່ຂອງພາກສ່ວນກ່ຽວຂ້ອງອື່ນ ແມ່ນຈະລາຍງານເປັນຊັບສິນອື່ນໆຂອງບໍລິສັດ.

ເຄື່ອງໃນສາງ

ເຄື່ອງໃນສາງສະແດງເຖິງມູນຄ່າທີ່ຕ່ຳກວ່າຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາເຄື່ອງໃນສາງມາຢູ່ໃນສະຖານທີ່ ແລະ ສະພາບໃນປັດຈຸບັນ ແລະ ມູນຄ່າສຸດທິ ທີ່ສາມາດຮັບຮູ້ໄດ້.

ມູນຄ່າສຸດທິທີ່ສາມາດຮັບຮູ້ໄດ້ແມ່ນລາຄາທີ່ຄາດວ່າຈະຂາຍຕາມເງື່ອນໄຂທາງທຸລະກິດທົ່ວໄປລົບຄ່າໃຊ້ຈ່າຍທີ່ຈະເຮັດໃຫ້ເປັນສິນຄ້າສຳເລັດຮູບ ແລະ ຄ່າໃຊ້ຈ່າຍຄາດຄະເນທີ່ເກີດຂຶ້ນຈາກການຂາຍ.

ວິທີການການບັນທຶກສິນຄ້າໃນສາງເມື່ອສິ້ນງວດ ແມ່ນຖືກນຳໃຊ້ໃນການບັນທຶກເຄື່ອງໃນສາງເຊິ່ງຖືກຕີມູນຄ່າດັ່ງຕໍ່ໄປນີ້:

ວັດຖຸດິບ	-ຕົ້ນທຶນຈາກການຊື້ຄິດໄລ່ມູນຄ່າສະເລ່ຍຕາມການຖ່ວງນ້ຳໜັກ.
ສິນຄ້າກຳລັງຜະລິດແລະສິນຄ້າສຳເລັດຮູບ	- ຕົ້ນທຶນຈາກຂອງອຸປະກອນໂດຍກົງແລະຄ່າແຮງງານບວກກັບຄ່າໃຊ້ຈ່າຍການຜະລິດໂດຍອີງໃສ່ຄວາມສາມາດປະຕິບັດງານປົກກະຕິ ບົນພື້ນຖານມູນຄ່າສະເລ່ຍຕາມການຖ່ວງນ້ຳໜັກ.

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງແມ່ນເກີດຈາກການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ຈາກການຫຼຸດລົງ, ຄວາມເສຍຫາຍ, ການລ້າສະໄໝແລະອື່ນໆ) ຂອງເຄື່ອງໃນສາງຂອງບໍລິສັດໂດຍປະເມີນຕາມຫລັກຖານການເສື່ອມມູນຄ່າທີ່ມີຢູ່ນະວັນທີຂອງໃນລາຍງານຖານະການເງິນ.

ການເພີ່ມຂຶ້ນແລະຫຼຸດລົງຂອງຍອດເງິນແຮແມ່ນບັນທຶກເຂົ້າຕົ້ນທຶນໃນການຂາຍ ແລະ ການຈັດຈຳໜ່າຍ ສະແດງໃນໃບລາຍງານຜົນການດຳເນີນງານ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ(ຕໍ່)

ໜີ້ຕ້ອງຮັບການຄ້າ ແລະ ເງິນແຮໜີ້ທວງຍາກ

ໜີ້ຕ້ອງຮັບການຄ້າ ແມ່ນຜົນລົບລະຫວ່າງ ໜີ້ຕ້ອງຮັບການຄ້າທັງໝົດ ແລະ ເງິນແຮໜີ້ທວງຍາກ.

ບໍລິສັດມີນະໂຍບາຍເງິນແຮໜີ້ຕ້ອງຮັບທວງຍາກສຳລັບໜີ້ຕ້ອງຮັບການຄ້າ ໂດຍອີງຕາມຈຳນວນມື້ກາຍກຳນົດຂອງໜີ້ຕ້ອງຮັບການຄ້າດັ່ງລຸ່ມນີ້:

ໄລຍະກາຍກຳນົດ	*ອັດຕາເງິນແຮ*
6 ເດືອນ ຫາ 1 ປີ	30%
ຫຼາຍກວ່າ 1 ປີ ຫາ 2 ປີ	50%
ຫຼາຍກວ່າ 2 ປີ	100%

ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງແລະເງິນຝາກທະນາຄານ.

ຕົ້ນທຶນເງິນກູ້

ຕົ້ນທຶນເງິນກູ້ ປະກອບດ້ວຍດອກເບ້ຍແລະລາຍຈ່າຍອື່ນໆທີ່ເກີດຂຶ້ນໃນບໍລິສັດເຊິ່ງກ່ຽວຂ້ອງກັບການກູ້ຢືມ. ຕົ້ນທຶນເງິນກູ້ ແມ່ນຖືກບັນທຶກເປັນລາຍຈ່າຍພາຍໃນໄລຍະທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ໜີ້ຕ້ອງສົ່ງທາງການຄ້າ, ລາຍຈ່າຍຄ້າງຈ່າຍແລະໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງທາງການຄ້າແລະລາຍຈ່າຍຄ້າງຈ່າຍຈະຖືກຮັບຮູ້ເປັນຈຳນວນທີ່ຕ້ອງຈ່າຍໃນອານາຄົດສຳລັບສິນຄ້າແລະການບໍລິການທີ່ໄດ້ຮັບ, ບໍ່ວ່າໃບບິນເກັບເງິນຈະຖືກສົ່ງໃຫ້ກັບບໍລິສັດຫຼືຍັງບໍ່ທັນສົ່ງກໍ່ຕາມ.

ທຶນຈົດທະບຽນທີ່ຖອກແລ້ວ

ທຶນຈົດທະບຽນທີ່ຖອກແລ້ວ ຈະຖືກຮັບຮູ້ໃນໃບລາຍງານຖານະການເງິນ ເມື່ອໄດ້ຮັບເງິນຈາກຂາຮຸ້ນໃນກໍລະນີ ທີ່ຖອກທຶນຈົດທະບຽນເປັນເງິນສົດ ຫຼື ເມື່ອມີການອະນຸມັດຈາກຂາຮຸ້ນໃນກໍລະນີທີ່ບໍ່ແມ່ນເງິນສົດ, ແລະ ໃບຢັ້ງຢືນຮຸ້ນ. ທຶນຈົດທະບຽນທີ່ຍັງບໍ່ທັນຖອກອີງຕາມກົດລະບຽບຂອງບໍລິສັດ, ໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນແມ່ນບໍ່ໄດ້ຖືກຮັບຮູ້ໃນໃບລາຍງານຖານະການເງິນ.

ສ່ວນເກີນມູນຄ່າຮຸ້ນ

ສ່ວນເກີນມູນຄ່າຮຸ້ນຖືກຮັບຮູ້ເວລາມີການອອກຮຸ້ນເພີ່ມ, ນະມູນຄ່າສ່ວນເກີນລະຫວ່າງລາຄາຂາຍຮຸ້ນຄັ້ງທຳອິດຂອງມູນຄ່າຮຸ້ນທີ່ອອກ ແລະ ມູນຄ່າໜ້າບັດ, ຫຼັງຈາກຫັກຕົ້ນທຶນຕ່າງໆທີ່ກ່ຽວຂ້ອງກັບການອອກຮຸ້ນ(ເຊັ່ນ: ຄ່າທຳນຽມການຄ້ຳປະກັນການອອກຮຸ້ນ ແລະ ລ່າຍຈ່າຍຕ່າງໆທີ່ກ່ຽວຂ້ອງ, ລາຍຈ່າຍຄ່າທີ່ປຶກສາ ແລະ ອື່ນໆ).

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ(ຕໍ່)**

ຄັງແຮ

ອີງຕາມກົດໝາຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013, ບໍລິສັດມະຫາຊົນຮຽກຮ້ອງໃຫ້ມີການຫັກກຳໄລສຸດທິຕາມຈຳນວນທີ່ເໝາະສົມເຂົ້າເປັນຄັງແຮຕາມລະບຽບການ.

ຄັງແຮຕາມລະບຽບການເປັນຄັງແຮເພື່ອຮັບປະກັນຄວາມສ່ຽງທີ່ຈະເກີດຂຶ້ນ, ເຊິ່ງ 10% ຂອງກຳໄລສຸດທິ ຈະຖືກຫັກເຂົ້າໃນຄັງແຮດັ່ງກ່າວ, ຫຼັງຈາກຫັກຂາດທຶນສະສົມ. ເມື່ອຄັງແຮດັ່ງກ່າວຫາກມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນ, ບໍລິສັດອາດຈະໂຈະການຫັກເງິນເຂົ້າຄັງແຮດັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບອະນຸມັດຈາກເຈົ້າຂອງບໍລິສັດ.

ຄັງແຮອື່ນໆປະກອບມີຄັງແຮກອງທຶນສະຫວັດດີການແລະຄັງແຮເພື່ອຂະຫຍາຍກິດຈະການເຊິ່ງຫັກຈາກກຳໄລສະສົມຕາມຄວາມເໝາະສົມອີງຕາມກົດລະບຽບຂອງບໍລິສັດລົງວັນທີ 15 ທັນວາປີ1998.ອັດຕາເງິນແຮທີ່ເໝາະສົມຈະຖືກພິຈາລະນາໂດຍສະພາບໍລິຫານຂອງບໍລິສັດໃນແຕ່ລະປີ.

ຄັງແຮຂອງປີການບັນຊີປັດຈຸບັນຖືກຫັກຈາກກຳໄລສຸດທິຂອງປີຜ່ານມາຕາມການອະນຸມັດໃນກອງປະຊຸມຂາຮຸ້ນປະຈຳປີ.

ເງິນຕາຕ່າງປະເທດ

ເອກະສານລາຍງານເງິນເປັນສະກຸນເງິນກີບລາວເຊິ່ງເປັນສະກຸນເງິນທີ່ບໍລິສັດໃຊ້ໃນການເຄື່ອນໄຫວ ແລະ ລາຍງານ.ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນອື່ນໆນອກເໜືອຈາກສະກຸນເງິນກີບແມ່ນຈະຖືກບັນທຶກໃນເບື້ອງຕົ້ນໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວເກີດຂຶ້ນ. ຊັບສິນແລະໜີ້ສິນທາງການເງິນທີ່ເປັນສະກຸນເງິນຕ່າງປະເທດແມ່ນຈະຖືກປ່ຽນເປັນເງິນກີບໂດຍນຳໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານຖານະການເງິນ. ກຳໄລ ແລະ ຂາດທຶນທັງໝົດຈະຖືກບັນທຶກໃນບັນຊີລາຍຮັບ ແລະ ລາຍຈ່າຍທາງການເງິນຕາມລຳດັບໃນໃບລາຍງານຜົນການດຳເນີນງານ.

ການຮັບຮູ້ລາຍຮັບ

ລາຍຮັບຈະຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າຜົນປະໂຫຍດທາງດ້ານເສດຖະກິດຈະໄດ້ຮັບໂດຍບໍລິສັດ ແລະ ລາຍຮັບດັ່ງກ່າວຕ້ອງສາມາດວັດແທກໄດ້ຢ່າງເຊື່ອຖື. ລາຍຮັບຈະຖືກວັດແທກດ້ວຍມູນຄ່າຍຸດຕິທຳຂອງລາຍຮັບຫຼືໜີ້ຕ້ອງຮັບທີ່ຖືກພິຈາລະນາ, ໂດຍບໍ່ລວມສ່ວນຫຼຸດທາງການຄ້າ, ການສົ່ງຄືນ ແລະການຮັບສິນຄ້າຄືນ.ຫຼັກການໃນການຮັບຮູ້ລາຍຮັບສະເພາະເຈາະຈົງດັ່ງຕໍ່ໄປນີ້ຕ້ອງຖືກຕ້ອງສອດຄ່ອງກ່ອນລາຍຮັບຈະຖືກຮັບຮູ້:

ການຂາຍສິນຄ້າ

ລາຍຮັບຈະຖືກຮັບຮູ້ເມື່ອຄວາມສ່ຽງແລະຜົນຕອບແທນຂອງການເປັນເຈົ້າຂອງຕໍ່ສິນຄ້າໄດ້ຖືກໂອນຜ່ານໄປຍັງຜູ້ຊື້, ໂດຍທົ່ວໄປ ແມ່ນອີງຕາມການຂົນສົ່ງສິນຄ້າ.

ດອກເບ້ຍ

ລາຍຮັບຈະຖືກຮັບຮູ້ເມື່ອມີດອກເບ້ຍຄ້າງຮັບ(ໂດຍຄຳນຶງເຖິງປະສິດທິພາບຂອງຊັບສິນ) ເວັ້ນເສຍແຕ່ວ່າມີຂໍ້ສົງໄສໃນການເກັບໜີ້.

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ(ຕໍ່)**

ອາກອນ

ອາກອນກຳໄລແມ່ນການຄາດຄະເນໜີ້ຕ້ອງສົ່ງອາກອນ ຕາມກຳໄລທີ່ຕ້ອງເສຍອາກອນພາຍໃນປີ, ໂດຍນຳໃຊ້ອັດຕາອາກອນກຳໄລທີ່ປະກາດໃຊ້ນະມື້ທີ່ກະກຽມໃບລາຍງານຖານະການເງິນ ແລະ ສາມາດນຳໃຊ້ໃນໄລຍະຂອງບົດລາຍງານແລະການດັດແກ້ຂອງໜີ້ຕ້ອງສົ່ງອາກອນກຳໄລຂອງປີທີ່ຜ່ານມາ.

ໜີ້ຕ້ອງສົ່ງອາກອນອື່ນໆປະກອບມີອາກອນມູນຄ່າເພີ່ມແລະອາກອນລາຍໄດ້ຂອງພະນັກງານ.

ອາກອນມູນຄ່າເພີ່ມແມ່ນອາກອນທີ່ຕ້ອງຈ່າຍໂດຍກຳນົດຈາກລາຍຮັບສຳລັບໄລຍະທີ່ມີການຄິດໄລ່ ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມໃນແຕ່ລະໄລຍະ.

ອາກອນລາຍໄດ້ແມ່ນອາກອນທີ່ຕ້ອງຈ່າຍໃນມູນຄ່າເງິນເດືອນທີ່ຈ່າຍໃຫ້ພະນັກງານຂອງໄລຍະດັ່ງກ່າວ ເຊິ່ງຄິດໄລ່ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມໃນແຕ່ລະໄລຍະ.

ການດັດແກ້ທີ່ກ່ຽວກັບມູນຄ່າຂອງອາກອນຕ້ອງຈ່າຍຂອງປີທີ່ຜ່ານມາດັ່ງບົດສະຫຼຸບການໄລ່ລຽງອາກອນຂອງເຈົ້າໜ້າທີ່ສ່ວຍສາອາກອນແມ່ນໄດ້ບັນທຶກໂດຍກົງໃນກຳໄລສະສົມ.

ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນຕ່າງໆຖືກພິຈາລະນາເປັນພາກສ່ວນທີ່ກ່ຽວຂ້ອງຖ້າຫາກວ່າ ພາກສ່ວນດັ່ງກ່າວມີຄວາມສາມາດໃນການຄວບຄຸມຫຼື ມີອິດທິພົນທີ່ສຳຄັນຕໍ່ກັນແລະກັນໃນການຕັດສິນໃຈທາງດ້ານການເງິນ ແລະ ການດຳເນີນງານ ຫຼື ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ ຫຼືມີອິດທິພົນທີ່ສຳຄັນຮ່ວມກັນ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນເກີດຂຶ້ນໂດຍອີງຕາມລາຄາຕະຫຼາດຫຼືອີງຕາມການເຫັນດີແລະຕົກລົງກັນຕາມສັນຍາໃນກໍລະນີທີ່ບໍ່ມີລາຄາຕະຫຼາດ.

4. ຊັບສິນບັດຄົງທີ່ມີຕົວຕົນ

	ອາຄານ ແລະ ສິ່ງປຸກສ້າງ *ກີບ*	*ເຄື່ອງຈັກ ແລະ ອຸປະກອນ* *ກີບ*	*ພາຫະນະຂົນສົ່ງ* *ກີບ*	*ສິດທິໃນການເຊົ່າ* *ກີບ*	*ເຄື່ອງໃຊ້ຫ້ອງການ* *ກີບ*	*ຊັບສິນອື່ນໆ* *ກີບ*	*ລວມ* *ກີບ*
ຕົ້ນທຶນ							
ນະວັນທີ31ທັນວາ2017	134,001,137,634	210,889,233,994	19,602,252,498	1,770,215,102	2,050,665,180	436,983,816	368,750,488,224
ຮັບເຂົ້າໃນປີ	-	-	586,219,700	26,397,950	19,705,000	55,982,470	688,305,120
ວັນທີ30ກັນຍາ2018	134,001,137,634	210,889,233,994	20,188,472,198	1,796,613,052	2,070,370,180	492,966,286	369,438,793,344
ຄ່າຫຼ້ຍຫ້ຽນສະສົມ							
ນະວັນທີ31ທັນວາ2017	102,694,656,180	207,622,918,827	19,141,180,655	1,460,065,019	1,862,420,722	426,662,157	333,207,903,560
ຄ່າຫຼ້ຍຫ້ຽນໃນປີ	7,379,855,657	2,631,824,559	48,654,013	52,263,740	95,877,888	10,321,659	10,218,797,516
ວັນທີ30ກັນຍາ2018	110,074,511,837	210,254,743,386	19,189,834,668	1,512,328,760	1,958,298,610	436,983,816	343,426,701,076
ມູນຄ່າສຸດທິ							
ວັນທີ31ທັນວາ2017	31,306,481,454	3,266,315,167	461,071,843	310,150,083	188,244,458	10,321,659	35,542,584,664
ວັນທີ30ກັນຍາ2018	23,926,625,797	634,490,608	998,637,530	284,284,292	112,071,570	55,982,470	26,012,092,268

5. ຊັບສິນພວມກໍ່ສ້າງ

	30ກັນຍາ2018	*31ທັນວາ2017*
	ກີບ	*ກີບ*
ໂຄງການຂຸດຄົ້ນບໍ່ແຮ່ຄອນພຸກ	3,774,907,837	3,275,364,082
ໂຄງການກໍ່ສ້າງໂຮງງານໄລຍະສອງ	2,278,637,931	1,142,409,144
	6,053,545,768	**4,417,773,226**

6. ຊັບສິນບໍ່ໝຸນວຽນອື່ນໆ

ມູນຄ່າຊັບສິນບໍ່ໝຸນວຽນອື່ນໆແມ່ນມູນຄ່າສຸດທິຂອງທີ່ດິນ ແລະ ເຮືອນເຊິ່ງຊື້ໂດຍບໍລິສັດແຕ່ຈົດທະບຽນພາຍໃຕ້ຊື່ທ່ານອັນ ທອງສິດທິກຸນອະດີດຜູ້ອຳນວຍການໃຫຍ່ຂອງບໍລິສັດ.

7. ເຄື່ອງໃນສາງ

	30ກັນຍາ2018	*31ທັນວາ2017*
	ກີບ	*ກີບ*
ວັດຖຸດິບແລະວັດຖຸສິນເປືອງຕ່າງໆ	8,929,538,698	4,886,547,920
ອຸປະກອນແລະວັດສະດຸ	13,554,971,956	13,156,886,482
ສິນຄ້າພວມຜະລິດ	10,555,000,456	5,717,488,331
ຜະລິດຕະພັນສຳເລັດຮູບ	33,170,340,194	7,080,928,266
	66,209,851,304	**30,841,850,999**

8. ໜີ້ຕ້ອງຮັບການຄ້າ

	31ກັນຍາ2018	*31ທັນວາ2017*
	ກີບ	*ກີບ*
ໜີ້ຕ້ອງຮັບການຄ້າທັງໝົດ	8,203,437,644	44,165,746,857
ເງິນແຮໜີ້ຕ້ອງຮັບທວງຍາກ	(828,280,431)	(2,084,224,380)
	7,375,157,213	**42,081,522,477**

ລາຍລະອຽດຂອງເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ນະວັນທີ 30 ກັນຍາ 2018 ມີດັ່ງນີ້:

ໄລຍະກາຍກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
6 ເດືອນ ຫາ 1 ປີ	·308,796,000	92,638,800
ຫຼາຍກວ່າ 1 ປີ ຫາ 2 ປີ	1,758,254,310	879,127,156
ຫຼາຍກວ່າ 2 ປີ	918,790,855	918,790,855
ລວມ	**2,985,841,165**	**1,890,556,811**

8. ໜີ້ຕ້ອງຮັບການຄ້າ(ຕໍ່)

ລາຍລະອຽດຂອງເງິນແຮສຳລັບໜີ້ຕ້ອງຮັບທ່ວງຍາກ ນະວັນທີ 31ທັນວາ 2017 ມີດັ່ງນີ້:

ໄລຍະກາຍກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
6 ເດືອນ ຫາ 1 ປີ	2,709,695,422	812,908,627
ຫຼາຍກ່ວາ 1 ປີ ຫາ 2 ປີ	1,245,855,387	622,927,693
ຫຼາຍກ່ວາ 2 ປີ	648,388,060	648,388,060
ລວມ	**4,603,938,869**	**2,084,224,380**

9. ການລົງທຶນໄລຍະສັ້ນ

ການລົງທຶນໄລຍະສັ້ນສະແດງເຖິງເງິນຝາກໄລຍະສັ້ນກັບສະຖາບັນການເງິນທ້ອງຖິ່ນ. ເງິນຝາກດັ່ງກ່າວແມ່ນຈະໄດ້ຮັບດອກເບ້ຍໃນອັດຕາດອກເບ້ຍເລີ່ມຈາກ 2.4%ຫາ5.59%ຕໍ່ປີ.

10. ເງິນສົດ

	30ກັນຍາ2018 *ກີບ*	*31ທັນວາ2017* *ກີບ*
ເງິນສົດໃນຄັງ	259,345,533	491,367,723
ເງິນຝາກທະນາຄານ	20,904,070,103	10,988,155,905
	21,163,415,636	**11,479,523,628**

11. ພັນທະອາກອນ

	30ກັນຍາ2018 *ກີບ*	*31ທັນວາ2017* *ກີບ*
ລາຍຈ່າຍອາກອນໃຫ້ກັບຜູ້ສະໜອງຕ່າງປະເທດ	1,697,587,677	2,589,076,770
ອາກອນມູນຄ່າເພີ່ມສິ້ນອອກ	3,609,066,845	2,690,501,806
ໜີ້ຕ້ອງສົ່ງອາກອນກຳໄລ*(ບົດອະທິບາຍຊ້ອນທ້າຍເລກທີ1)*	1,822,143,219	1,821,182,892
ອາກອນອື່ນໆ	108,921,672	83,392,680
	7,237,719,413	**7,184,154,148**

12. ການທຶນສະຫວັດດີການ

	2018 ກີບ	2017 ກີບ
ນະວັນທີ 1 ມັງກອນ	3,886,282,366	8,002,865,857
ຫັກຈາກກໍາໄລສະສົມ	860,412,476	580,367,002
ຈ່າຍອອກ	(97,595,500)	(1,117,128,600)
ນະວັນທີ 30 ມິຖຸນາ	**4,649,099,342**	**7,466,104,259**

13. ໜີ້ຕ້ອງສິ່ງອື່ນໆ

	30ກັນຍາ2018 ກີບ	31ທັນວາ2017 ກີບ
ໜີ້ຕ້ອງຈ່າຍເງິນປັນຜົນ(*)	14,222,990,650	15,240,964,360
ໜີ້ຕ້ອງສິ່ງອື່ນໆ	913,393,749	71,384,410
	15,136,384,399	**15,312,348,770**

(*)ລາຍລະອຽດຂອງການຈ່າຍເງິນປັນຜົນມີດັ່ງນີ້:

	30ກັນຍາ2018 ກີບ	31ທັນວາ2017 ກີບ
ໜີ້ຕ້ອງຈ່າຍເງິນປັນຜົນປະຈໍາປີ2017	641,626,290	-
ໜີ້ຕ້ອງຈ່າຍເງິນປັນຜົນປະຈໍາປີ2016	3,395,146,965	3,395,146,965
ໜີ້ຕ້ອງຈ່າຍເງິນປັນຜົນປະຈໍາປີ2015	5,773,056,205	5,773,056,205
ໜີ້ຕ້ອງຈ່າຍເງິນປັນຜົນປະຈໍາປີ2014	4,413,161,190	4,810,162,990
ໜີ້ຕ້ອງຈ່າຍເງິນປັນຜົນປະຈໍາປີ2013	-	1,262,598,200
	14,222,990,650	**15,240,964,360**

14. ທຶນຈົດທະບຽນຕາມກົດໝາຍທີ່ຖອກແລ້ວ

14.1 ຮຸ້ນ

	30 ກັນຍາ 2018		*31ທັນວາ2017*	
	ຈໍານວນ	*ມູນຄ່າ (ກີບ)*	*ຈໍານວນ*	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸຍາດ				
ຮຸ້ນທີ່ໄດ້ອອກ ແລະ ຈ່າຍ				
ຮຸ້ນສາມັນ	40,004,000	20,002,000,000	28,002,800	14,001,400,000

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສໍາເລັດການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທໍາອິດ (IPO) ເລກທີ 0008/ສຄຄຊ ອອກໃຫ້ໂດຍສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ເນື່ອງຈາກວ່າບໍລິສັດໄດ້ສໍາເລັດຂັ້ນຕອນ IPO ເຊິ່ງຮຸ້ນຈໍານວນ 12,001,200 ຮຸ້ນລາຄາໜ້າບັດ 500 ກີບ/ຮຸ້ນ ແລະ ລາຄາຂາຍຮຸ້ນມູນຄ່າ 2,400 ກີບ/ຮຸ້ນ ໄດ້ຖືກ ຂາຍອອກ.

ມູນຄ່າຂອງຮຸ້ນທັງໝົດ 40,004,000 ຮຸ້ນຂອງບໍລິສັດ (ພາຍໃຕ້ການເຈົ້າຂອງ "ຊີມັ້ງລາວ") ຖືກຈົດທະບຽນຢ່າງເປັນທາງ ການໃນຕະຫຼາດຫຼັກຊັບ ນະວັນທີ 2 ມີນາ 2018. ມູນຄ່າໜ້າບັດຂອງແຕ່ລະຮຸ້ນແມ່ນ 500ກີບ.

14.2 ເງິນປັນຜົນ

ສະກຸນເງິນ: ກີບ

	ສໍາລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ30 ກັນຍາ2018	*ສໍາລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ30 ກັນຍາ2017*
ເງິນປັນຜົນຕ້ອງຈ່າຍໃນໄລຍະ	**2,800,279,200**	**3,772,385,517**
ເງິນປັນຜົນຂອງຮຸ້ນສາມັນສໍາລັບ 2017: 63 ກີບ ຕໍ່ ຮຸ້ນ (2016: 121)	2,800,279,200	3,772,385,517

15. ລາຍຮັບຈາກການຂາຍສິນຄ້າ

	ສໍາລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ກັນຍາ2018 ກີບ	*ສໍາລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ກັນຍາ2017 ກີບ*
ຂາຍຊີມັ້ງເປົ່າ	28,315,477,117	42,145,571,213
ຂາຍຊີມັ້ງຜົງ	23,346,081,783	46,499,575,268
ຂາຍກະລິງເກົ່າ	-	1,663,520,455
	51,661,558,900	**90,308,666,936**

16. ຕົ້ນທຶນການຂາຍ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ30 ກັນຍາ2018 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ30 ກັນຍາ2017 ກີບ*
ຕົ້ນທຶນການຂາຍຂອງຊີມັງເປົ່າ	13,707,652,642	29,885,296,283
ຕົ້ນທຶນການຂາຍຂອງຊີມັງຝຸ່ນ	22,501,572,208	39,511,278,515
ຕົ້ນທຶນການຂາຍຂອງກະລິງເກົ່າ	-	1,655,206,421
	36,209,224,850	**71,051,781,219**

17. ຕົ້ນທຶນຈາກການຂາຍແລະຈັດຈຳໜ່າຍ

	ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດ ວັນທີ30 ກັນຍາ2018 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ30 ກັນຍາ2017 ກີບ*
ຄ່າຂົນສົ່ງ	2,787,327,166	6,730,783,642
ລາຍຈ່າຍໃຫ້ພະນັກງານ	955,076,862	792,529,497
ລາຍຈ່າຍຄ່າຫຼຸ້ຍຫ້ຽນ	105,816,049	104,603,022
ລາຍຈ່າຍອື່ນໆ	218,909,436	503,959,789
	4,067,129,513	**8,131,875,950**

18. ລາຍຈ່າຍໃນການບໍລິຫານ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ30 ກັນຍา2018	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ30 ກັນຍา2017*
	ກີບ	*ກີບ*
ລາຍຈ່າຍໃຫ້ພະນັກງານ	2,939,303,442	1,992,309,000
ລາຍຈ່າຍທາງວິຊາການ	1,011,837,580	988,577,930
ຄ່າຫຼຸ້ຍຫ້ຽນ	172,553,806	282,931,263
ລາຍຈ່າຍຄ່າສາທາລະນຸປະໂພກ ແລະ ນ້ຳມັນ	197,939,555	194,984,128
ລາຍຈ່າຍຄ່າເຊົ່າ	343,703,000	240,450,000
ລາຍຈ່າຍຄ່າບຳລຸງຮັກສາ	116,019,599	139,579,400
ລາຍຈ່າຍຄ່າການພິມ ແລະ ເຜີຍແຜ່	213,417,860	296,608,900
ລາຍຈ່າຍຄ່າເດີນທາງ	153,107,289	126,919,010
ຄ່າບຳເນັດ ແລະ ລາຍຈ່າຍອື່ນໆຂອງພະນັກງານ	-	-
ລາຍຈ່າຍບໍລິຫານອື່ນໆ	3,031,514,356	2,330,365,439
	8,179,396,487	**6,592,725,070**

19. ລາຍຮັບທາງການເງິນ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ30 ກັນຍา2018	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ30 ກັນຍา2017*
	ກີບ	*ກີບ*
ກຳໄລຈາກອັດຕາແລກປ່ຽນ	372,265,735	407,913,997
	372,265,735	**407,913,997**

20. ລາຍຈ່າຍທາງການເງິນ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ30 ກັນຍา2018	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ30 ກັນຍา2017*
	ກີບ	*ກີບ*
ຂາດທຶນຈາກອັດຕາແລກປ່ຽນ	735,286,069	370,859,602
ລ່າຍຈ່າຍດອກເບ້ຍ	229,244,386	1,276,779,637
	964,530,455	**1,647,639,239**

21. ອາກອນກຳໄລ

ອີງຕາມໃບຢັ້ງຢືນການລົງທຶນສະບັບປັບປຸງວັນທີ 17 ພະຈິກ 1998, ບໍລິສັດແມ່ນຈະຖືກຍົກເວັ້ນອາກອນກຳໄລສຳລັບ ສີ່ປີທຳອິດ, ພິນກຳໄລຂອງປີທຳອິດອາກອນກຳໄລຈະຫຼຸດລົງ50% ຂອງອາກອນກຳໄລທີ່ປະກາດໃຊ້ສຳລັບສອງປີຖັດໄປ. ບໍລິສັດມີພັນທະໃນການຈ່າຍອາກອນກຳໄລໃນອັດຕາ20%ຫຼັງຈາກໄລຍະເວລາຂໍອະນຸຍາດຫຼຸດອາກອນ. ພິນກຳໄລປີທຳ ອິດແມ່ນທ້າຍປີການບັນຊີ ນະວັນທີ 31 ທັນວາ 2005.

ບໍລິສັດ ໄດ້ຈົດທະບຽນກັບຕະຫຼາດຫຼັກຊັບລາວນັບແຕ່ 2 ມີນາ 2018. ອີງຕາມໜັງສືແຈ້ງການເລກທີ 2618/ກສອ ຈາກ ກະຊວງການເງິນ, ບໍລິສັດ ອະນຸຍາດໃຫ້ຫຼຸດອາກອນກຳໄລ 5% ຈາກອັດຕາອາກອນປົກກະຕິສຳລັບ ຫ້າ ປີທຳອິດຈາກປີ 2018 ຫາ 2021. ຫຼັງຈາກ, ບໍລິສັດມີພັນທະໃນການຈ່າຍອາກອນກຳໄລໃນອັດຕາ 20%. ດັ່ງນັ້ນ, ອາກອນກຳໄລຂອງ ບໍລິສັດສຳລັບປີ 2018 ຈະຖືກຈ່າຍໃນອັດຕາອາກອນກຳໄລ 15%.

ອາກອນທີ່ເກັບຄືນໂດຍບໍລິສັດ ຕ້ອງໄດ້ຖືກກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ການນຳໃຊ້ກົດໝາຍວ່າດ້ວຍສ່ວຍສາ ອາກອນແລະກົດລະບຽບຕ່າງໆມີການປ່ຽນແປງໄປໃນການຕີຄວາມໝາຍທີ່ແຕກຕ່າງກັນ,ມູນຄ່າທີ່ລາຍງານໃນເອກະສານ ລາຍງານການເງິນອາດຈະປ່ຽນແປງພາຍຫຼັງເອກະສານລາຍງານການເງິນຖືກກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

ໜີ້ຕ້ອງສົ່ງອາກອນພາຍໃນປີແມ່ນອີງຕາມອາກອນກຳໄລຕ້ອງຈ່າຍໃນລະຫວ່າງປີ.ໜີ້ສິນອາກອນພາຍໃນປີຂອງບໍລິສັດຖືກ ຄິດໄລ່ໂດຍການນຳໃຊ້ອັດຕາອາກອນທີ່ໄດ້ຖືກປະກາດໃຊ້ໃນມື້ອອກໃບລາຍງານຖານະການເງິນ.

ການຄາດຄະເນອາກອນກຳໄລກ່ອນຖືກສະແດງຢູ່ຂ້າງລຸ່ມນີ້:

	ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດ ວັນທີ30 ກັນຍາ2018 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ30 ກັນຍາ2017 ກີບ*
ກຳໄລກ່ອນຫັກອາກອນ	**2,643,240,580**	**3,292,559,454**
ດັດແກ້ເພື່ອເພີ່ມ/(ຫຼຸດລົງ)ກຳໄລກ່ອນຫັກອາກອນ:		
ເງິນແຮໜີ້ທວງຍາກ	(193,667,569)	510,974,000
ລາຍຈ່າຍອື່ນໆທີ່ບໍ່ອະນຸຍາດໃຫ້ຫັກ	762,924,847	-
ຄາດຄະເນອາກອນກຳໄລຕ້ອງມອບໃນໄລຍະ	**3,212,497,858**	**3,803,533,454**
ຄາດຄະເນລ່າຍຈ່າຍອາກອນກຳໄລພາຍໃນປີໃນອັດຕາ 15 %		
(2017: 20%)	764,782,068	930,228,541
ອາກອນກຳໄລຕ້ອງຈ່າຍໃນໄລຍະ	1,821,182,892	1,526,556,207
ດັດແກ້ການເພີ່ມຂຶ້ນຂອງອາກອນກຳໄລຂອງປີທີ່ຜ່ານມາອີງ		
ຕາມບົດລາຍງານການໄລ່ລ່ຽງອາກອນ	-	1,900,000,000
ອາກອນກຳໄລທີ່ໄດ້ຈ່າຍໃນໄລຍະ	(763,821,741)	(750,000,000)
ອາກອນກຳໄລຕ້ອງຈ່າຍທ້າຍໄລຍະ *(ເອກະສານຊ້ອນທ້າຍ ເລກ ທີ 11)*	**1,822,143,219**	**3,606,784,748**

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນການປະຕິບັດທາງສັນຍາຕາມລາຄາທີ່ໄດ້ຕົກລົງກັນໄວ້. ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນໄຕມາດ3 ທີ່ສິ້ນສຸດວັນທີ 30ກັນຍາ 2018ແລະວັນທີ 30 ກັນຍາ 2017ມີດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*ສຳລັບໄຕມາດ3ທີ່ສິ້ນສຸດ ວັນທີ 30 ກັນຍາ 2018 ກີບ*	*ສຳລັບໄຕມາດ3ທີ່ສິ້ນສຸດ ວັນທີ 30 ກັນຍາ 2017 ກີບ*
ບໍລິສັດຮ່ວມມືສາກົນດ້ານ ເສດຖະກິດ-ເຕັກນິກຢຸນ ນານສປ ຈີນ (CYC)	ຜູ້ຖືຮຸ້ນ	ລາຍຈ່າຍຈາກການຈັດຊື້ ວັດຖຸດິບ	96,749,491	-
		ເງິນປັນຜົນທີ່ຕ້ອງຈ່າຍ	899,640,600	1,923,916,613
		ລາຍຈ່າຍເງິນປັນຜົນ	829,800,000	-
ລັດວິສາຫະກິດພັດທະນາ ກະສິກຳ-ອຸດສາຫະກຳແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ລາຍຈ່າຍຈາກການຈັດຊື້ ວັດຖຸດິບ	9,017,790,790	8,881,582,520
		ເງິນປັນຜົນທີ່ຕ້ອງຈ່າຍ	864,360,000	1,848,468,903
		ລາຍຈ່າຍເງິນປັນຜົນ	1,694,160,000	-

ຍອດເຫຼືອໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງນະວັນທີ 30 ກັນຍາ 2018 ແລະ ວັນທີ31 ທັນວາ 2017ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*30 ກັນຍາ2018 ກີບ*	*31ທັນວາ 2017 ກີບ*
ຈຳນວນໜີ້ຕ້ອງຮັບພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດຮ່ວມມືສາກົນດ້ານ ເສດຖະກິດ-ເຕັກນິກຢຸນ ນານສປຈີນ (CYC)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	1,150,484,824	1,603,514,408
ລັດວິສາຫະກິດພັດທະນາ ກະສິກຳ-ອຸດສາຫະກຳ ແລະບໍລິການຂາອອກ-ຂາ ເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	6,311,516,430	1,587,698,190
			7,462,001,254	**3,191,212,598**

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ(ຕໍ່)

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*30 ກັນຍາ2018*	*30ກັນຍາ 2017*
			ກີບ	*ກີບ*
ໜີ້ຕ້ອງສົ່ງອື່ນໆ (ເອກະສານຊ້ອນທ້າຍ ເລກທີ 13)				
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານສປຈີນ (CYC)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	8,178,984,080	8,566,183,504
ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	6,043,830,570	6,674,780,856
			14,222,990,650	**15,240,964,360**

ລາຍການເຄື່ອນໄຫວອື່ນໆຂອງພາກສ່ວນທີ່ກ່ຽວຂ້ອງ

ຄ່າຕອບແທນໃຫ້ຄະນະບໍລິຫານໃນໄລຍະມີດັ່ງລຸ່ມນີ້:

	ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30ກັນຍາ2018	*ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30ກັນຍາ2017*
	ກີບ	*ກີບ*
ເງິນເດືອນ ແລະ ໂບນັດ	918,923,085	766,734,682
	918,923,085	**766,734,682**

23. ເຫດການພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງຈາກວັນທີ່ສ້າງໃບລາຍງານຖານະການເງິນສຳລັບໄຕມາດ3 ທີ່ຮຽກຮ້ອງໃຫ້ມີການດັດແກ້ຫຼືເປີດເຜີຍໃນເອກະສານລາຍງານການເງິນສຳລັບໄຕມາດ3 ຂອງປີ 2018.

24. ການອະນຸມັດອອກເອກະສານລາຍງານການເງິນ

ເອກະສານລາຍງານການເງິນສຳລັບໄຕມາດ3 ນະວັນທີທີ່ສິ້ນສຸດວັນທີ 30ກັນຍາ 2018ແມ່ນໄດ້ຖືກອະນຸມັດໂດຍຄະນະຜູ້ອຳນວຍການຂອງບໍລິສັດໃນວັນທີ31ຕຸລາ 2018..

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານ ຈ່າງ ລີ
ຜູ້ອຳນວຍການໃຫຍ່
31ຕຸລາ 2018

ທ່ານ ຈ່າງ ຢົງ ຟູ
ຜູ້ຈັດຝ່າຍການບັນຊີ-ການເງິນ